ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ
ກົມການນໍາເຂົ້າ ແລະ ສົ່ງອອກ

ເລກທີ 0726 /ກຂອ.ບຂອ
ນະຄອນຫຼວງວຽງຈັນ, ວັນທີ 04 ກຸມພາ 2019

# ແຈ້ງການ

ເຖິງ: ບັນດາທ່ານອໍານວຍການບໍລິສັດນໍາເຂົ້າ ແລະ ສົ່ງອອກ ຍານພາຫະນະ.

ເລື່ອງ: ເລີ່ມນໍາໃຊ້ການອອກອະນຸຍາດນໍາເຂົ້າ ແລະ ສົ່ງອອກຍານພາຫະນະຜ່ານລະບົບແຈ້ງພາສີປະຕູດຽວ (Lao National Single Window - LNSW).

- ອີງຕາມຂໍ້ຕົກລົງວ່າດ້ວຍການອະນຸມັດນໍາໃຊ້ລະບົບແຈ້ງພາສີປະຕູດຽວ ເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019

ກົມການນໍາເຂົ້າ ແລະ ສົ່ງອອກ (ກຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ເພື່ອເປັນການປະຕິບັດບັນດານະໂຍບາຍຂອງລັດຖະບານໃນການປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດໃຫ້ມີຄວາມສະດວກດີຍິ່ງຂຶ້ນ, ກົມການນໍາເຂົ້າ ແລະ ສົ່ງອອກ ຈະໄດ້ເລີ່ມອອກໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກຍານພາຫະນະຜ່ານລະບົບແຈ້ງພາສີປະຕູດຽວ (ລະບົບໃໝ່) ໂດຍຜ່ານເວບໄຊ www.laonsw.net ແຕ່ວັນທີ 25 ກຸມພາ ເປັນຕົ້ນໄປ. ສະນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດນໍາເຂົ້າ ແລະ ສົ່ງອອກຍານພາຫະນະໃຫ້ຮີບຮ້ອນສະເໜີ ຫາ ກົມພາສີ ເພື່ອຂໍລະຫັດຜູ້ນໍາໃຊ້ລະບົບດັ່ງກ່າວໂດຍປະກອບເອກະສານຕາມແບບຟອມເອກະສານຊ້ອນທ້າຍ 2 ຂອງ ບົດແນະນໍາວ່າດ້ວຍການນໍາໃຊ້ລະບົບແຈ້ງພາສີປະຕູດຽວ ເລກທີ 4217/ກງ, ລົງວັນທີ 28 ທັນວາ 2018.

ໃນໄລຍະເລີ່ມຕົ້ນການນໍາໃຊ້ລະບົບໃໝ່ບໍລິສັດສາມາດສືບຕໍ່ສະເໜີຂໍອອກໃບອະນຸຍາດນໍາເຂົ້າແບບເກົ່າ (ອອກໃບອະນຸຍາດແບບລະບົບເຈັ້ຍ) ຈົນກວ່າຈະມີໜັງສືແຈ້ງໃຫ້ນໍາໃຊ້ລະບົບໃໝ່ໂດຍສົມບູນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ສຸລິຍົນ ພິລາວົງ